Source: Vientiane Times (for Lao language version), date: 12 April 2021

This news states that the plywood mill (of this company) had started to be built in 2019 and it's now completed. The factory is located in Hinheap district, Vientiane province.

vientianetimeslao.la/ໂຮງງານໄມ້ອັດບໍລິສັດບົວ/

Home - ຂ່າວທັງໝົດ - ພາຍໃນປະເທດ - ໂຮງງານໄມ້ອັດບໍລິສັດບົວລະພາ ຈະເລີ່ມ ຜະລິດໄມ້ອັດຢ່າງເປັນທາງການໃນ ເດືອນມິຖຸນາທີ່ຈະມາເຖິງນີ້

# ໂຮງງານໄມ້ອັດບໍລິສັດບົວລະພາ ຈະເລີ່ມ ຜະລິດໄມ້ອັດຢ່າງເປັນທາງການໃນ ເດືອນມິຖຸນາທີ່ຈະມາເຖິງນີ້

ພາຍໃນປະເທດ

12 April 2021

7 months ago

0 429 Less than a minute

ໂຮງງານຜະລິດໄມ້ອັດ ບໍລິສັດ ບົວລະພາ ກະສິກຳ – ປ່າໄມ້ ຈຳກັດ ຢູ່ເມືອງຫີນເຫີບ ແຂວງວຽງຈັນ ຈະເລີ່ມເດີນເຄື່ອງຈັກ ຫຼື ເລີ່ມຜະລິດໄມ້ອັດຢ່າງເປັນທາງການໃນເດືອນມິຖຸນາ 2021 ທີ່ຈະມາເຖິງນີ້ໂດຍໄດ້ມີການທົດລອງຜະລິດໄມ້ອັດເພື່ອທົດລອງເຄື່ອງຈັກ ແລະ ກວດສອບລະບົບຕ່າງໆຂອງໂຮງງານນັບແຕ່ທ້າຍເດືອນມີນາ 2021 ເປັນຕົ້ນມາ ຊຶ່ງໂຮງງານມີຄວາມຕ້ອງການວັດຖຸດິບປະມານ 1 ແສນແມັດກ້ອນຕໍ່ປີ ແລະ ສາມາດຜະລິດໄມ້ອັດໄດ້ 50.000 ແມັດກ້ອນຕໍ່ປີ ຊຶ່ງ 95% ຂອງໄມ້ອັດທີ່ຜະລິດແມ່ນສົ່ງອອກ.

ທ່ານ ນາງ ສຸໄພວັນ ທ່ຽງຈັນໄຊ ຮອງຜູ້ອຳນວຍການ ບໍລິສັດ ບົວລະພາ ກະສິກຳ ຈຳກັດ ໄດ້ກ່າວວ່າ: ປັດຈຸບັນນີ້ບໍລິສັດມີຄວາມພ້ອມທຸກດ້ານ ຊຶ່ງປະກອບມີຕົ້ນໄມ້ເພື່ອປ້ອນໂຮງງານ, ລົດຕັດໄມ້, ພະນັກງານຂັບລົດ ແລະ ອື່ນໆ. ສ່ວນແຮງງານທີ່ຈະເຂົ້າເຮັດວຽກໃນໂຮງງານໄດ້ກະກຽມໄວ້ແລ້ວ 100 ກວ່າຄົນ, ໃນນັ້ນ 50 ຄົນທີ່ຜ່ານການຝຶກງານ ແລະ ໄດ້ເຊັນຍັ້ງຢືນເປັນພະນັກງານແລ້ວ, ສ່ວນອີກ 50 ກວ່າຄົນ ແມ່ນກຳລັງຜ່ານການຝຶກງານຄາດວ່າຈະສາມາດເຊັນຮັບເປັນພະນັກງານໃນໄວໆນີ້ ຫຼື ກ່ອນເປີດໂຮງງານໃນເດືອນມິຖຸນານີ້.

ໂຮງງານຜະລິດໄມ້ອັດ ບໍລິສັດ ບົວລະພາ ໄດ້ເລີ່ມລົງມືກໍ່ສ້າງໃນກາງປີ 2019 ທີ່ຜ່ານມາ ຮອດປັດຈຸບັນສຳເລັດແລ້ວ 100% ໂດຍແມ່ນບໍລິສັດ CAMCE ເປັນຜູ້ຮັບເໝົາກໍ່ສ້າງ ໃນມູນຄ່າຫຼາຍກວ່າ 12 ລ້ານໂດລາສະຫະລັດ.

ຂ່າວ: Ty Keo